ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປລາວ

National Regulatory Authority
for UXO/Mine Action Sector in Lao PDR

# ບົດບັນທຶກກອງປະຊຸມກຸ່ມວິຊາການ ວຽກງານຊ່ວຍເຫຼືອຜູ້ເຄາະຮ້າຍປະຈຳເດືອນ ເມສາ-ພຶດສະພາ 2009
## ຈັດທີ່ ຫ້ອງປະຊຸມຫ້ອງການ ຄຊຊ. ວັນທີ 26 ພຶດສະພາ 2009

**ຜູ້ເຂົ້າຮ່ວມ**

| ລ/ດ | ຊື່ ແລະ ນາມສະກຸນ | ພາກສ່ວນ | ໂທລະສັບ | ອີເມລ |
|---|---|---|---|---|
| 1. | ທ່ານ ທອງພົນ ແກ້ວໄຊຍະເດດ | ຫົວໜ້າພະແນກປະຕິບັດງານ | 5505571 | thongphone@etllao.com |
| 2. | ທ່ານ ສໍລະເດດ ບັນນະວົງ | ຜູ້ແປພາສາ | 5513774 | soradetj@yahoo.com |
| 3. | John Fenech | ທີ່ປຶກສາໜ່ວຍງານປະຊາສຳພັນ | 7529505 | Johnfenech15@gmail.com |
| 4. | Tim Horner | ທີ່ປຶກສາອະວຸໂສຫ້ອງການ ຄຊຊ | 5516251 | Tim.horner@undp.org |
| 5. | Barbara Lewis | ອົງການສຶກສາໂລກ | 5521439 | barbara@wec.laopdr.com |
| 6. | ທ່ານ ນາງ ບຸນສົງ ພຸດທະວົງ | ອົງການສຶກສາໂລກ | 4600162 | bounsong@wec.laopdr.com |
| 7. | ທ່ານ ຄຳລວງ ແກ້ວກາ | ອົງການ Oxfam ອົດສະຕາລີ | 021450870 | khamlouangk@oxfam.org.au |
| 8. | ທ່ານ ຄຳປານ ລາດສະວົງ | ຫ້ອງການ ຄກລ | 2243053 | |
| 9. | ທ່ານ ມິ່ງຂວັນຄຳ ສີສະຫວັດ | ໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ | 2208973 | Mingkhouankham@gmail.com |
| 10. | ທ່ານ ບຸນຕາວ ຈັນທະວົງສາ | ໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ | 2207361 | bountao@etllao.com |
| 11. | Mike Boddington | ທີ່ປຶກສາໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ | 5610050 | mikebdd@laopdr.com |
| 12. | ທ່ານ ສົມໃຈ ຊຽງວ່າງ | ໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ | 2544749 | vangchengvang@yahoo.com |
| 13. | ທ່ານ ໄຊສົມຫວັງ ສຸວັນນະວົງ | ໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ | 7714706 | saysomvnag@gmail.com |
| 14. | Amy Delneaville | UNICEF | 021315200 | adelneuville@unicef.org |
| 15. | Dulce Carandang Simmanivong | AusAID | 350800227 | Dulce.simmanivong@dfat.gov.au |
| 16. | ທ່ານ ມອນ ສີສະຫວັດ | AusAID | 353800177 | Mone.sysavath@dfat.gov.au |
| 17. | ທ່ານ ພົມມະຈັນ | ຫົວໜ້າໜ່ວຍງານເກັບກູ້ | 5693136 | pmc@etllao.com |
| 18. | Phil Bean | ທີ່ປຶກສາວຽກເກັບກູ້ ແລະ ມາດຕະຖານ | 2013929 | pbean@armorgroupamerica.com |
| 19. | Kim Warren | HIB | | kimwarren@hilaos.org |
| 20. | Richard O'Brien | POWER | | vsorichard@hotmail.com |
| 21. | ທ່ານ ທອງດີ ພົມມະວົງສາ | ຫົວໜ້າໜ່ວຍງານໂຄສະນາຄວາມສ່ຽງ | 5669883 | thongdy@etllao.com |
| 22. | ທ່ານ ນາງ ປານີ ສຸວັນທະລີສິດ | ໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ | | |
| 23. | ທ່ານ ນາງ ທິບພະຈັນ ສີລັກຄຳ | ໜ່ວຍງານສຶກສາຄວາມສ່ຽງ | 5890128 | thiphachanh@etllao.com |
| 24. | ທ່ານ ຄຳຫຼ້າ ສົມບູນ | ໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ | 5400905 | khamlasomboun@yahoo.com |
| 25. | ທ່ານ ບຸນນັນ ລັດຕະນະວົງ | ໜ່ວຍງານມາດຕະຖານ | 5866772 | bounn@etllao.com |

**ວາລະທີ 1: ຕ້ອນຮັບ ແລະ ແນະນຳຕົນເອງ**

**ທ່ານ ທອງພິນ** ຫົວໜ້າພະແນກປະຕິບັດງານ ກ່າວຕ້ອນຮັບຜູ້ເຂົ້າຮ່ວມທຸກທ່ານ ພ້ອມກັບສະແດງຄວາມຄິດເຫັນຕໍ່ກັບກອງປະຊຸມທົບທວນແຜນຍຸດທະສາດ ໃນໄລຍະ ວັນທີ 20-21 ເດືອນ ພຶດສະພາ 2009. ມັນເປັນກອງປະຊຸມທີ່ມີຄວາມໝາຍຄວາມສຳຄັນ ແລະ ມີຜົນປະໂຫຍດຫຼາຍ, ພວກເຮົາໄດ້ມີຄວາມຄິດເຫັນ ເພື່ອທີ່ຈະສະເໜີຕໍ່ລັດຖະບານ. ທ່ານອ້າງເຖິງຄຳເວົ້າຂອງທ່ານ ສະເຫຼີມໄຊ ກົມມະສິດ, ຫົວໜ້າກົມຈັດຕັ້ງສາກົນ ກະຊວງການຕ່າງປະເທດ ທີ່ກ່າວໄວ້ວ່າ ພວກເຮົາຈຳເປັນຕ້ອງຈັດກອງປະຊຸມນີ້ຫຼາຍກວ່າໜຶ່ງຄັ້ງກ່ອນທີ່ໄດ້ເປັນເອກະສານຢ່າງສົມບູນ.

ກິດຈະກຳ: ບໍ່ມີ

**ເວລາ**: ບໍ່ມີ.

**ຮັບຜິດຊອບ**: ບໍ່ມີ.

### ວາລະທີ 2 ຜ່ານບົດລາຍກອງປະຊຸມຄັ້ງຜ່ານມາ

**ທ່ານ ມົ່ງຂວັນຄຳ** ໄດ້ລາຍງານບົດບັນທຶກກອງປະຊຸມຄັ້ງຜ່ານມາ ແລະ ໄດ້ທົບທວນບາງຈຸດທີ່ສຳຄັນ ໂດຍສະເພາະແມ່ນກິດຈະກຳ, ກອບເວລາ ແລະ ຄວາມຮັບຜິດຊອບຕໍ່ກັບທຸກໆວາລະທີ່ໄດ້ປຶກສາຫາລືກັນ. ຫຼັງຈາກນັ້ນ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມທຸກຄົນມີ ຄຳຄິດເຫັນ ແລະ ປັບປຸງແປງຈຸດທີ່ບໍ່ຖືກ. ລາວຍັງໄດ້ແນະນຳວ່າ ບົດບັນທຶກກອງປະຊຸມ ທັງພາສາລາວ ແລະ ພາສາອັງກິດ ຈະໄດ້ເຜີຍແຜ່ທີ່ ເວັບໄຊ ຂອງ ຄຄຊ ໄວໆນີ້.

**ກິດຈະກຳ**: ບົດບັນທຶກກອງປະຊຸມຈະຖືກແປເປັນພາສາລາວ ແລ້ວເອົາເຂົ້າ ເວບໄຊ ຂອງ ຄຄຊ

ເວລາ: ດ່ວນ

ຮັບຜິດຊອບ: ມົ່ງຂັວນຄຳ

### ວາລະທີ 3 ການຍົກບັນຫາ

ບໍ່ມີບັນຫາຫຍັງຖືກຍົກຂຶ້ນມາສົນທະນາ ຫຼື ສະເໜີ.

**ກິດຈະກຳ**: ບໍ່ມີ

**ເວລາ**:

**ຮັບຜິດຊອບ**:

### ວາລະທີ 4 ກອງປະຊຸມທົບທວນແຜນຍຸດທະສາດ ຄຄຊ: ເຫດການປະຈຸບັນ ແລະ ບັນຫາທີ່ຖືກຍົບຍົກ

(ການລາຍງານນີ້ແມ່ນໄດ້ສະເໜີເປັນວາລະທຳອິດ) **ທ່ານ Tim Horner** ໄດ້ລາຍງານຜົນໄດ້ຮັບກອງປະຊຸມທົບທວນແຜນຍຸດທະສາດ ທີ່ໄດ້ຈັດຂຶ້ນທີ່ ໂຮງແຮມ Lao Hotel Plaza ໃນລະຫວ່າງວັນທີ 20-21 ພຶດສະພາ 2009 ທີ່ຜ່ານມາ. ໃນນັ້ນກວມເອົາບາງບັນຫາເຊັ່ນ: ອົງປະກອບຂອງກອງປະຊຸມ, ຜູ້ເຂົ້າຮ່ວມ, ຖະແຫຼງການຕ່າງໆ, ສົນທິສັນຍາສາກົນ, ການລະດົມຄວາມຄິດເຫັນ, ວິທີການ ແລະ ຜົນໄດ້ຮັບ. ທ່ານ Tim Horner ຍັງໄດ້ກ່າວເຖິງ ການນຳໃຊ້ ການວິເຄາະຈຸດຢືນ ໂດຍນຳໃຊ້ຮູບການ SWOT Analyses; ການພັດທະນາຍຸດທະສາດຮອບດ້ານ (SMART strategy); ການກຳນົດວິໄສທັດ, ຈຸດປະສົງ ແລະ ຕົວຊີ້ວັດຕ່າງໆ

**ກິດຈະກຳ**: Tim ຈະເອົາລາຍລະອຽດທັງໝົດລົງທີ່ເວບໄຊ ຂອງ ຄຄຊ

ເວລາ: ໄວໆນີ້.

**ຮັບຜິດຊອບ**: Tim Horner.

### ວາລະທີ 5 ແຜນຍຸດທະສາດການຊ່ວຍເຫຼືອຜູ້ເຄາະຮ້າຍ

**ທ່ານ Mike**: ລາຍງານຜົນກອງປະຊຸມກ່ຽວກັບການສ້າງແຜນຍຸດທະສາດ. ພວກເຮົາໄດ້ຮ່າງໜັງສືລາຍລະອຽດໜ້າວຽກແລ້ວ 06 ສະບັບ ແລະ ການບັນທຶກການສະເໜີແນວຄິດທີ່ລະເໜີໂດຍຜູ້ເຂົ້າຮ່ວມ ຈາກກົມປິ່ນປົວ ກະຊວງສາທາລະນະສຸກ ລວມມີ ທ່ານຮອງສາດສະດາຈານ ດຣ. ຈັນພົມມາ ວົງສຳພັນ, ດຣ. ພິສິດ ແລະ ທ່ານ ນາງ ສຸມະນາ ໃນການຈັດກອງປະຊຸມກ່ຽວກັບບວງການປິ່ນປົວສຸກເສີນ.

ຮ່າງໜັງສືລາຍລະອຽດໜ້າວຽກກ່ຽວກັບການສືບຕໍ່ການປິ່ນປົວໄດ້ຮັບການກະກຽມໂດຍ ທ່ານ ນາງ Kim Warren ອົງການ Handicap International Belgium.

ຮ່າງໜັງສືລາຍລະອຽດໜ້າວຽກ ວຽກງານການຟື້ນຟູສະພາບຮ່າງກາຍ ໄດ້ຖືກກະກຽມ ໂດຍ ທ່ານ Mike. ເນື້ອໃນແມ່ນໄດ້ສຸມໃສ່ຄວາມສາມາດໃນການເຄື່ອນໄຫວຂອງຜູ້ພິການ (ທີ່ບໍ່ລວມພິການທາງຕາ ແລະ ຫູ) ແລະ ຜູ້ທີ່ມີຜົນກະທົບຮ້າຍແຮງຈາກລະເບີດ.

ຮ່າງໜັງສືລາຍລະອຽດໜ້າວຽກກ່ຽວກັບການຟື້ນຟູສະພາບທາງຈິດໃຈ ແລະ ສັງຄົມ ໄດ້ຖືກກະກຽມໂດຍທ່ານ Luc Delneuville ຈາກອົງການ Handicap International Belgium (HIB) ໂດຍຮ່ວມມືກັບ ສະມາຄົມຄົນພິການແຫ່ງຊາດ

ຮ່າງໜັງສືລາຍລະອຽດໜ້າວຽກ ກ່ຽວກັບການສ້າງເສດຖະກິດ ແລະ ການຝຶກອົບຮົມວິຊາຊີບໄດ້ຮັບການກະກຽມໂດຍ ທ່ານ ນາງ Barbara Levis ຈາກອົງການ ສຶກສາໂລກ World Education Consortium (WEC)

ຮ່າງໜັງສືລາຍລະອຽດໜ້າວຽກກ່ຽວກັບການສົ່ງເສີມຜູ້ພິການ ໄດ້ຖືກກະກຽມໂດຍ ທ່ານ Luc Delneuville ຈາກອົງການ Handicap International Belgium ໂດຍຮ່ວມມືກັບ ສະມາຄົມຄົນພິການແຫ່ງຊາດ

ຮ່າງໜັງສືລາຍລະອຽດໜ້າວຽກ ກ່ຽວກັບກອບທາງກົດໝາຍ ໄດ້ຖືກກະກຽມໂດຍທ່ານ Mike (ເພື່ອຍົກສູງວຽກການສົ່ງເສີມຄົນພິການ)

**ທ່ານ Mike** ກຳລັງກະກຽມຮ່າງໜັງສືລາຍລະອຽດໜ້າວຽກກ່ຽວກັບການເກັບກຳຂໍ້ມູນ

ກອງປະຊຸມລະດົມຄວາມຄິດເຫັນແມ່ນຈະໄດ້ຈັດໃນທຸກໆຂົງເຂດວຽກເພື່ອການຊຸກດັນໃຫ້ວຽກງານກ້າວໄປທາງໜ້າ.

ທ່ານ ນາງ Barbara Levis ສະເໜີວ່າຄວນມີພະນັກງານຈາກກົມປິ່ນປົວ ກະຊວງສາທາລະນະສຸກ ເຂົ້າຮ່ວມກອງປະຊຸມ

ກິດຈະກຳ: ກອງປະຊຸມເພື່ອລະດົມຄວາມຄິດເຫັນວຽກງານການຟື້ນຟູສະພາບທາງດ້ານຈິດໃຈ ແລະ ສັງຄົມ ຈະໄດຈັດຂຶ້ນໃນລະຫວ່າງວັນທີ 8-10 ເດືອນ 6 2009 ນີ້

ເວລາ: ຈະຊອກວັນທີ່ເໝາະສົມ.

ຮັບຜິດຊອບ: ໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ.

## ວາລະທີ 6 ການເຄື່ອນໄຫວຂອງພະນັກງານ (ພະນັກງານເກັບກຳຂໍ້ມູນ ແລະ ພະນັກງານຖານຂໍ້ມູນ)

**ທ່ານ ມິ່ງຂວັນຄຳ** ລາຍງານ ວ່າທາງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ ໄດ້ຈ້າງພະນັກງານໃໝ່ 02 ຄົນ. ຜູ້ທີ່ໜຶ່ງແມ່ນ ທ່ານ ໄຊສົມຫວັງ ສຸວັນນະວົງ ຖືກຈ້າງເປັນທີ່ປຶກສາທາງດ້ານຖານຂໍ້ມູນ ເຊິ່ງມີສັນຍາ 08 ເດືອນ ແຕ່ວັນທີ 18/05/2009-18/01/2010. ອີກຜູ້ໜຶ່ງ ແມ່ນທ່ານ ຄຳຫຼ້າ ສົມບູນ ຖືກຈ້າງໃນຕຳແໜ່ງ ພະນັກງານກວດກາຂໍ້ມູນພາກສະໜາມ (VAPE)

**ກິດຈະກຳ**: ບໍ່ມີ

**ເວລາ**:

**ຮັບຜິດຊອບ**:

## ວາລະທີ 7 ການສຳຫຼວດຂໍ້ມູນໄລຍະ 1 ກ່ຽວກັບຜູ້ເຄາະຮ້າຍ ແລະ ອຸບັດຕິເຫດ

**ທ່ານ Mike** ລາຍງານຮ່າງບົດລາຍງານການສຳຫຼວດຜູ້ເຄາະຮ້າຍໄລຍະ I ແຕ່ບໍ່ທັນມີການລາຍງານການເງິນ. ທາງໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍຈະເຮັດໃຫ້ສຳເລັດ ແລະ ສົ່ງໃຫ້ທຸກພາກສ່ວນ ໂດຍໄວທີ່ສຸດ.

ທ່ານ ບຸນຕາວ ເສີມຕື່ມວ່າ ບົດລາຍງານທີ່ເປັນພາສາລາວກໍ່ໄດ້ອີງໃສ່ບົດລາຍງານທີ່ເປັນພາສາອັງກິດ ທີ່ ທ່ານ Mike ໄດ້ກຽມໄວ້ແລ້ວ. ຈົນເຖິງປະຈຸບັດມີແບບຟອມທີ່ປ້ອນ ແລະ ຢັ້ງຢືນແລ້ວປະມານ 46,000 ແບບຟອມ

ກິດຈະກຳ: ສຳເລັດການເຮັດບົດລາຍງານການເງິນ ແລ້ວສົ່ງໃຫ້ໜ່ວຍງານຕ່າງໆ
ເວລາ: ໄວໆ.
ຮັບຜິດຊອບ: ບຸນຕາວ.

## ວາລະທີ 8 ການສຳຫຼວດອຸບັດຕິເຫດ ແລະ ຜູ້ເຄາະຮ້າຍໄລຍະ II

**ທ່ານ ທອງພິນ** ເວົ້າວ່າພວກເຮົາຕ້ອງການບົດລາຍງານການສຳຫຼວດໄລຍະ I ເພື່ອທີ່ຈະເລີ່ມການສຳຫຼວດໄລຍະ II

**ທ່ານ Mike** ເນັ້ນຢ້ຳວ່າມັນເປັນພັນທະຂອງ ຫ້ອງການ ຄຄຊ ໃນການປະຕິບັດກິດຈະກຳ ພາຍໄຕ້ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ໃນການສ້າງຕັ້ງຫ້ອງການ ຄຄຊ. ຫຍິ່ງໄປກວ່ານັ້ນ, ລາວຍັງມີພັນທະຕໍ່ກັບສົນທິສັນຍາຕ້ານລະເບີດບົ່ມບີ ເຊິ່ງມັນຮຽກຮ້ອງໃຫ້ມີການສຳຫຼວດຈຳນວນອຸບັດຕິເຫດທີ່ຍັງເກີດຂຶ້ນ.

**ທ່ານ Phillip Bean** ຖາມວ່າພະແນກໃດຂອງແຂວງ ແລະ ຂອງເມືອງ ຈະມີສ່ວນຮ່ວມເປັນຈຸດປະສານງານ.

**ທ່ານ Mike**: ຕອບວ່າ ພະແນກແຮງງານສະຫວັດດີການສັງຄົມ ແຂວງ ແລະ ເມືອງ

ທ່ານ ທອງພິນ ເສີມວ່າ ຈຸດປະສານງານບາງບ່ອນອາດມາຈາກ ພາກສ່ວນສາທາລະນະສຸກ ແຕ່ວ່າທາງແຂວງຕ້ອງໄດ້ຍ້າຍພວກກ່ຽວໃຫ້ໄປຂຶ້ນກັບຫ້ອງວ່າການ.

**ທ່ານ Mike** ຊີ້ແຈງວ່າ ການສຳຫຼວດໄລຍະ II ບໍ່ມີຫຍັງສັບສົນ, ຈຸດປະສານງານພຽງແຕ່ເປັນຊ່ອງທາງສື່ສານ ຂໍ້ມູນເບື້ອງຕົ້ນ ເຊັ່ນ: ວັນທີ, ສະຖານທີ່ເກີດອຸບັດຕິເຫດ ຫຼັງຈາກນັ້ນຜູ້ເກັບກຳຂໍ້ມູນຈະໄປທີ່ເກີດເຫດ ເພື່ອເກັບກຳຂໍ້ມູນ. ໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍຈະເປັນສູນປະສານເພື່ອໃຫ້ຜູ້ຮັບບາດເຈັບໄດ້ຮັບການປິ່ນປົວໂດຍໄວ

ທ່ານ ບຸນຕາວ: ເສີມວ່າ ໃນທຸກໆກອງປະຊຸມທີ່ພວກເຮົາຈັດ ພວກເຮົາຈະໄດ້ແນະນຳໃຫ້ທຸກຈຸດປະສານງານຮັບຮູ້ແຕ່ຂັ້ນຕອນຊ່ວຍເຫຼືອຫຼັງຈາກອຸບັດຕິເຫດເກີດຂຶ້ນ.

**ທ່ານ Philip Bean** ສະເໜີວ່າຈຸດປະສານງານຂັ້ນຕ່າງໆຄວນສາມາດປະສານງານໃນການຊ່ວຍເຫຼືອຜູ້ເຄາະຮ້າຍໄດ້.

**ທ່ານ ຄຳລວງ ແກ້ວກາ**: ມັນມີລະບົບການເຮັດວຽກເພື່ອຊ່ວຍເຫຼືອປະຊາຊົນຢູ່ເຂດຊົນນະບົດຢູ່ແລ້ວ ແລະ ພວກເຮົາຄວນພະຍາຍາມນຳໃຊ້ລະບົບດັ່ງກ່າວນີ້. ຍົກຕົວຢ່າງ ຄະນະກຳມະການຄຸ້ມຄອງອຸບັດຕິໄພຂັ້ນບ້ານ

**ທ່ານ ທອງພິນ** ເວົ້າວ່າ ນາຍບ້ານເປັນຜູ້ເບິ່ງແຍງທຸກເຫດການທີ່ເກີດຂຶ້ນພາຍໃນບ້ານ ແລະ ການວຽກງານຊ່ວຍເຫຼືອຜູ້ເຄາະຮ້າຍກໍ່ເປັນອີກໜຶ່ງອົງປະກອບ.

**ທ່ານ ຄຳລວງ ແກ້ວກາ** ເສີມຕື່ມວ່າ ພວກເຮົາພຽງແຕ່ຝຶກອາສາສະໝັກຂັ້ນບ້ານ ແທນທີ່ຈະສ້າງຕັ້ງລະບົບໃໝ່ຂຶ້ນໄດ້ບໍ່? ແລະ ໃນຂັ້ນເມືອງຄວນແມ່ນທ່ານຮອງເຈົ້າເມືອງເປັນຜູ້ຮັບຜິດຊອບ. ໃນການຊ່ວຍເຫຼືອຜູ້ເຄາະຮ້າຍ ຄວນມີສຸກສະລາ ທີ່ກະກຽມໄວ້ເພື່ອຊ່ວຍຜູ້ໄດ້ຮັບບາດເຈັບຈາກລະເບີດ.

**ທ່ານ Mike** ເວົ້າວ່າ ຂໍ້ສະເໜີນີ້ແມ່ນອນຕ້ອງຖືກບັນຈຸລົງໃນໜັງສືລາຍລະອຽດໜ້າວຽກໃນການສ້າງຍຸດທະສາດ.

ກິດຈະກຳ: ການສຳຫຼວດໄລຍະ II ຈະເລີ່ມໃນໄວໆນີ້; ກິດຈະກຳ: ການຊ່ວຍເຫຼືອຜູ້ເຄາະຮ້າຍແມ່ນຈະບັນຈຸໃນໜັງສືລາຍລະອຽດໜ້າວຽກ
ເວລາ: ສຳລັບ ການສຳຫຼວດ ແມ່ນໄວໆນີ້: ສຳລັບການຊ່ວຍເຫຼືອ ແມ່ນຈະບັນຈຸໃນກອງປະຊຸມສ້າງແຜນຍຸດທະສາດແຕ່ລະຄັ້ງ.
ຮັບຜິດຊອບ: ທັງໝົດ.

## ວາລະທີ 9 ວັນທີ່ຈັດກອງປະຊຸມຄັ້ງຕໍ່ໄປ 28 ກໍລະກົດ 2009, ເວລາ 09:00)

ກິດຈະກຳ: ເຂົ້າຮ່ວມກອງປະຊຸມຄັ້ງຕໍ່ໄປ
ເວລາ: 28 ກໍລະກົດ 2009.
**ຮັບຜິດຊອບ**: ທັງໝົດ.

**ວາລະທີ 10 ວຽກອື່ນໆ**

**ທ່ານ ນາງ** Kim Warren: ແຈ້ງທີ່ປະຊຸມກ່ຽວກັບນັກສຶກສາປະລິນຍາໂທ ທີ່ຕ້ອງການການຊ່ວຍເຫຼືອຈາກພາກສ່ວນ ລ.ບ.ຕ UXO. ຕົກລົງກັນວ່າ Kim ຈະເປັນຂອດຕິດຕໍ່ກັບນັກຮຽນຄົນດັ່ງກ່າວ.

**ກິດຈະກຳ**: ເພື່ອປະສານງານຫານັກຮຽນຜູ້ນັ້ນ
**ເວລາ**: ໄວເທົ່າທີ່ຈະໄວໄດ້.
ຮັບຜິດຊອບ: Kim Warren

**ວາລະທີ 11 ກ່າວປິດກອງປະຊຸມ**

**ທ່ານ ທອງພິນ** ກ່າວຂອບໃຈ ຕໍ່ກັບຜູ້ເຂົ້າຮ່ວມທັງໝົດ ພ້ອມກັບອວຍພອນໃຫ້ ໂຊກດີ ມີຄວາມສຸກໃນການເຮັດວຽກໃນ ສ.ປ.ປ.ລາວ

**ຮັບຮອງໂດຍ**

**ລາຍງານໂດຍ**
**ນີ່ງຂວັນຄຳ ສີສະຫວັດ**
**ທີ່ວໜ້າໜ່ວຍງານຊ່ວຍເຫຼືອຜູ້ເຄາະຮ້າຍ**